ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສຳນັກງານ ຄຄຊ
ເລກທີ...1202...
ວັນທີ...16 NOV 2018...
ໂທລະສັບ 021 217770

ເລກທີ: 46 /ທຫກ

ນະຄອນຫຼວງວຽງຈັນ, ວັນທີ: 14 ພະຈິກ 2018

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ປະຈຳອາທິດທີ 22-26/10/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,93% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກລວມຍອດຜະລິດຕະພັນພາຍໃນ (GDP) ຂອງສະຫະລັດອາເມລິກາ ໃນໄຕມາດ 3/2018 ຢູ່ທີ່ລະດັບ 3,5% ຊຶ່ງສູງກວ່າຕົວເລກທີ່ນັກວິເຄາະໄດ້ຄາດຄະເນໄວ້ວ່າຈະຢູ່ທີ່ລະດັບ 3,4% ຈາກລະດັບ 4,2% ໃນໄຕມາດຜ່ານມາ. ພ້ອມກັນນັ້ນ, ຕົວເລກຍອດສັ່ງຊື້ສິນຄ້າຄົງທົນສືບຕໍ່ຂະຫຍາຍຕົວ ເພີ່ມຂຶ້ນມາຢູ່ໃນລະດັບ 0,8% ໃນເດືອນ 9/2018.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 15-19/10/2018 | ອາທິດນີ້ 22-26/10/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1457 | 1,1351 | 0,93% |
| ເຢນ/ໂດລາ | 112,36 | 111,91 | 0,40% |
| ບາດ/ໂດລາ | 32,610 | 33,110 | -1,51% |
| ເປໂຊ/ໂດລາ | 53,70 | 53,59 | 0,20% |
| ຣູເປັຍ/ໂດລາ | 15.185,00 | 15.215,00 | -0,20% |
| ໂດລາສິງກະໂປ/ໂດລາ | 1,3788 | 1,3836 | -0,35% |
| ຢວນ/ໂດລາ | 6,9312 | 6,9453 | -0,20% |

### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ຫຼຸດລົງ 3,94% ເປັນ 66,23 ໂດລາ/ບາເຣວ ພາຍຫຼັງຄັງສຳຮອງນ້ຳມັນດິບຂອງ ສະຫະລັດອາເມລິກາ ເພີ່ມຂຶ້ນໃນລະດັບທີ່ຫຼຸດລົງມາຢູ່ 6,35 ລ້ານບາເຣວ ໃນອາທິດທີ 19/10/2018 ຈາກທີ່ເຄີຍເພີ່ມຂຶ້ນຮອດລະດັບ 6,49 ລ້ານບາເຣວ ໃນອາທິດຜ່ານມາ;
- ລາຄາຄຳ ເພີ່ມຂຶ້ນ 0,67% ເປັນ 1.236,67 ໂດລາ/ອອນ ເນື່ອງຈາກຄ່າຂອງເງິນໂດລາມີການຜັນຜວນ ເຮັດໃຫ້ນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ.

## 2. ສະພາບການຊື້-ຂາຍອັດຕາແລກປ່ຽນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,04% ແຕ່ແຂງຄ່າຂຶ້ນ 0,92% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 3,63% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 4,00% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 15-19/10/2018 | | | ອາທິດນີ້ 22-26/10/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8,610,20 | 8.634,82 | 8.622,29 | 8,610,02 | 8.640,57 | 8.625,89 | 0,002% | -0,07% | -0,04% | -3,58% | -3,63% | -3,63% |
| ບາດ | 268,51 | 269,85 | 269,28 | 266,43 | 267,12 | 266,81 | 0,78% | 1,02% | 0,92% | -4,28% | -3,88% | -4,00% |

### 2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 2,77% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີ ຜ່ານມາ ເພີ່ມຂຶ້ນ 12,12%;
- ປະລິມານເງິນ M2 ຫຼຸດລົງ 0,31% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8,26%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (19-25/10/2018) ເຫັນວ່າ ທທກ ຂາຍເງິນໂດລາສຸດທິ 1,13 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 23,26 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 24,39 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 115,20 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 129,27 ລ້ານບາດ ແລະ ຂາຍເງິນບາດໄດ້ 244,47 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາ ຫຼຸດລົງ 79,26% ແລະ ເງິນບາດ ຫຼຸດລົງ 85,04%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິໃຫ້ທະນາຄານທຸລະກິດ ຈຳນວນ 6,67 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 26,70 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 8,88 ລ້ານໂດລາ ແລະ ເງິນບາດ ຈຳນວນ 19,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ບໍ່ມີການຊື້-ຂາຍເງິນໂດລາ ແລະ ເງິນບາດ.

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 12-18/10/2018 | | ອາທິດນີ້ 19-25/10/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. <u>ການຊື້ເງິນຕາຕ່າງປະເທດ</u>** | **83.89** | **627.90** | **23,26** | **129,27** | **-72,27%** | **-79,41%** |
| - ທ/ຄທຸລະກິດລັດ | 11.29 | 110.74 | 6,80 | 55,48 | -39,77% | -49,90% |
| - ທ/ຄທຸລະກິດອື່ນໆ | 72.60 | 517.16 | 16,46 | 73,79 | -77,33% | -85,73% |
| **2. <u>ການຂາຍເງິນຕາຕ່າງປະເທດ</u>** | **145.84** | **1,870.50** | **24,39** | **244,47** | **-83,28%** | **-86,93%** |
| - ທ/ຄທຸລະກິດລັດ | 13.77 | 133.94 | 8,52 | 103,99 | -38,13% | -22,36% |
| - ທ/ຄທຸລະກິດອື່ນໆ | 132.07 | 1,736.56 | 15,87 | 140,48 | -87,98% | -91,91% |
| **<u>ຊື້-ຂາຍສຸດທິ ທທກ</u>** | **-61.95** | **-1,242.60** | **-1,13** | **-115,20** | **-98,18%** | **-90,73%** |
| - ຜິດດ່ຽງຊື້-ຂາຍ | -73.85% | -197.90% | -4,86% | -89,12% | -93,42% | -54,97% |
| **- ມູນຄ່າການຊື້-ຂາຍ** | **229.73** | **2,498.40** | **47,65** | **373,74** | **-79,26%** | **-85,04%** |
| **3. <u>ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ</u>** | **-52.53** | **-362.99** | **-6,67** | **-26,70** | | |
| - ທຫລ ຊື້ຈາກ ທທກ | 0.73 | 1.10 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 53.26 | 364.09 | 6,67 | 26,70 | | |
| **4. <u>ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ</u>** | **7.93** | **103.30** | **8,88** | **19,00** | | |
| **5. <u>ທຫລ ກັບ ພາກສ່ວນອື່ນໆ</u>** | **0,00** | **0,00** | **0,00** | **0,00** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

2.4 <u>ສະພາບອັດຕາເງິນເຟີ້</u>

ອັດຕາເງິນເຟີ້ໃນເດືອນ 10/2018 ຄາດວ່າຈະຢູ່ໃນລະດັບ 3,18%.

2.5 <u>ການຄຸ້ມຄອງເງິນຕາຕ່າງປະເທດ</u>

ທະນາຄານແຫ່ງ ສປປ ລາວ ໄດ້ມີກະແສເງິນໄຫຼອອກສຸດທິ ຜ່ານລະບົບທະນາຄານ ຈຳນວນ 52,91 ລ້ານໂດລາສະຫະລັດ. ໃນນັ້ນ, ປະຈຳອາທິດວັນທີ (19-25/10/2018) ໃນນັ້ນ, ສຳລັບກະແສເງິນໄຫຼອອກ ມີຈຳນວນ 129,02 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຊຳລະຄ່ານຳເຂົ້າສິນຄ້າ ຈຳນວນ 113,32 ລ້ານໂດລາສະຫະລັດ, ລາຍຈ່າຍອື່ນໆ ຈຳນວນ 7,53 ລ້ານໂດລາສະຫະລັດ ແລະ ຊຳລະຄ່າບໍລິການ ຈຳນວນ 3,43 ລ້ານໂດລາສະຫະລັດ) ແລະ ສຳລັບກະແສເງິນໄຫຼເຂົ້າ ແມ່ນມີຈຳນວນ 76,11 ລ້ານໂດລາສະຫະລັດ (ຊຶ່ງສ່ວນໃຫຍ່ແມ່ນຮັບຈາກການສົ່ງອອກສິນຄ້າ ຈຳນວນ 31 ລ້ານໂດລາສະຫະລັດ, ຮັບຄ່າບໍລິການ ຈຳນວນ 25,46 ລ້ານໂດລາສະຫະລັດ ແລະ ຮັບຈາກເງິນລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 5,79 ລ້ານໂດລາສະຫະລັດ).

3. <u>ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ</u>

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 686 ສະບັບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 158 ສະບັບ ເທົ່າກັບ 18,72% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 359,48 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 12,45 ຕື້ກີບ ເທົ່າກັບ 3,59%.

- ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (19-25/10/2018) ມີທັງໝົດ 3.265 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 3.168 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ ຈຳນວນ 387,7 ຕື້ກີບ ຈາກ 925,29 ຕື້ກີບ ມາເປັນ 1,312,99 ຕື້ກີບ ເທົ່າກັບ 41,90%;

- **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 97 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ ຈຳນວນ 142,73 ຕື້ກີບ ຈາກ 22,20 ຕື້ກີບ ມາເປັນ 164,93 ຕື້ກີບ ເທົ່າກັບ 642%.

**4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ**

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 837,24 ຈຸດ ຫຼຸດລົງ ຈາກ 839,72 ຈຸດ ຫຼື ເທົ່າກັບ 0,30% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 360.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,69 ຕື້ກີບ ເພີ່ມຂຶ້ນ 4,28% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 81,54% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການຫຼຸດລົງຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ PCD ແລະ LAT. ສ່ວນການເພີ່ມຂຶ້ນຂອງມູນຄ່າການຊື້-ຂາຍແມ່ນມາຈາກການເພີ່ມຂຶ້ນຂອງມູນຄ່າການຊື້-ຂາຍຮຸ້ນ BCEL ເນື່ອງມາຈາກ ການເປີດເຜີຍຂໍ້ມູນກອງປະຊຸມທົບທວນຜົນການດຳເນີນທຸລະກິດ ທຄຕລ ປະຈຳໄຕມາດ 03/2018 ທີ່ໄດ້ປະເມີນຜົນການດຳເນີນທຸລະກິດຂອງ ທຄຕລ ໃຂອບເຂດທົ່ວປະເທດ, ເຊິ່ງໄດ້ຍົກໃຫ້ເຫັນຜົນສຳເລັດໃນຫຼາຍດ້ານຈຶ່ງເຮັດໃຫ້ຜູ້ລົງທຶນພາຍໃນ ແລະ ຕ່າງປະເທດ ເຂົ້າມາຊື້ຮຸ້ນເພີ່ມຂຶ້ນ.

➢ **ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)**

| ບໍລິສັດ | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ | ມູນຄ່າການ ຊື້-ຂາຍ | ລາຄາ ປ່ຽນແປງ (%) |
| **BCEL** | 97.700 | 547.195.000 | 5.600 | **250.100** | **1.400.820.000** | **5.650** | 155,99 | 156 | 0,89 |
| **EDL-GEN** | 136.500 | 550.055.000 | 4.100 | **27.200** | **111.020.000** | **4.100** | -80,07 | -79,82 | - |
| **LWPC** | - | - | 8.000 | - | - | **8.000** | - | - | - |
| **PTL** | 600 | 840.000 | 1.400 | **5.700** | **7.990.000** | **1.500** | 850 | 851,19 | 7,14 |
| **SVN** | - | - | 1.500 | | | **1.500** | - | - | - |
| **PCD** | 100 | 120.000 | 1.200 | **20.300** | **24.330.000** | **1.100** | 20.200 | 20.175 | -8,33 |
| **LCC** | - | - | 1.900 | - | - | **1.900** | - | - | - |
| **MHTL** | 182.500 | 528.875.000 | 2.950 | **51.700** | **148.980.000** | **2.950** | -71,67 | -71,83 | - |
| **LAT** | 300 | 245.000 | 750 | **5.500** | **3.850.000** | **700** | 1.733,33 | 1.471,43 | -6,67 |
| ທັງໝົດ | 417.700 | 1.627.330.000 | | **360.500** | **1.696.990.000** | | -13,69 | 4,28 | |

**5. ວຽກງານອື່ນໆທີ່ພົ້ນເດັ່ນ.**

- ອອກແຈ້ງການເຖິງບັນດາສະຖາບັນການເງິນໃນຂອບເຂດທົ່ວປະເທດ ຫ້າມບໍ່ໃຫ້ດຳເນີນທຸລະກິດທີ່ກ່ຽວຂ້ອງກັບເງິນຄຣິບໂຕ;

- **ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມຄົບຄະນະຂອງຄະນະບໍລິຫານງານສູນກາງພັກ ຄັ້ງທີ 7 ສະໄໝທີ x; ❷ ກອງປະຊຸມປຶກສາຫາລືກ່ຽວກັບການລະດົມທຶນເພື່ອດຸ່ນດ່ຽງງົບປະມານ ແລະ ປະກອບເພີ່ມໃຫ້ຄັງສຳຮອງເງິນຕາຕ່າງປະເທດ, ❸ ກອງປະຊຸມປັບປຸງຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ, ❹ ເຂົ້າຮ່ວມກອງປະຊຸມລະດັບສູງກ່ຽວກັບການສະເຫຼີມສະຫຼອງ ການເປີດປະເທດ ແລະ ປະຕິຮູບລະບອບເສດຖະກິດຂອງ ສປ

ຈີນ (ປະເທດ ສປ ຈີນ), ❺ ຈັດກອງປະຊຸມໂຄສະນາເຜີຍແຜ່ຄວາມຮູ້ກ່ຽວກັບການລົງທຶນໃນຫົວຂໍ້: "ຄວາມເຂົ້າໃຈພື້ນຖານກ່ຽວກັບການລົງທຶນໃນຮຸ້ນ", ❻ ສຳເລັດການເຜີຍແຜ່ນິຕິກຳໃນການຄຸ້ມຄອງສະຖາບັນການເງິນຢູ່ ແຂວງຊຽງຂວາງ;

**III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>**

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ;
- ສືບຕໍ່ຄົ້ນຄວ້າ ນຳສະເໜີແຜນພິມເງິນ ເພື່ອກະຕຸ້ນເສດຖະກິດ ຕາມແຜນເງິນຕາປະຈຳປີ 2019 ທີ່ໄດ້ກຳນົດໄວ້;
- ສືບຕໍ່ຕິດຕາມການທົດລອງ ລະບົບອັດຕາດອກເບ້ຍສະເລ່ຍຖ່ວງນ້ຳໜັກ ແລະ ຕິດຕັ້ງໂປຣແກຣມດຳເນີນທຸລະກຳຕະຫຼາດລະຫວ່າງທະນາຄານ ໄລຍະ 02 ພ້ອມທັງກະກຽມແຜນຈັດກອງປະຊຸມເຜີຍແຜ່ວຽກງານ CIB (ຂໍ້ມູນຂ່າວສານສິນເຊື່ອ) ໃຫ້ບັນດາພາກສ່ວນທີ່ກ່ຽວຂ້ອງ;
- ສືບຕໍ່ກະກຽມເນື້ອໃນ ໃຫ້ແກ່ກອງປະຊຸມສະພາບໍລິຫານ ທຫລ ຄັ້ງທີ II ປະຈຳປີ 2018;
- **ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ:** ❶ ກອງປະຊຸມທະວິພາຄີຮ່ວມມືສອງຝ່າຍກັບທະນາຄານແຫ່ງປະເທດໄທ, ❷ ກອງປະຊຸມເປີດກວ້າງລະດົມຄຳເຫັນໃສ່ຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ, ❸ ກອງປະຊຸມປຶກສາຫາລືວຽກສະມາຄົມທະນາຄານລາວ, ❹ ກອງປະຊຸມລຸລ່ວງການລົງກວດກາ ແລະ ປັບປຸງສິດນຳໃຊ້ຄອມພິວເຕີ, ❺ກອງປະຊຸມຄະນະຮັບຜິດຊອບຈັດການປະມູນອຸປະກອນລະບົບພື້ນຖານໂຄງລ່າງໄອທີຂອງ ທຫລ,❻ ກອງປະຊຸມຄົບຄະນະຂອງກຳມາທິການ ແຜນການ, ການເງິນ ແລະ ການກວດສອບ ປະຈຳປີ 2018;
- ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບຈາກ ທະນາຄານກຸງໄທ;

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ